ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---===000===---

ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ

ສຳນັກງານ ຄລຕ

ເລກທີ 371 /ສຄລຕ

ນະຄອນຫລວງວຽງຈັນ, ວັນທີ 24 FEB 2012

# ແຈ້ງການ

**ເຖິງ** : - ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງສ້າງຕັ້ງບໍລິສັດຫຼັກຊັບ;

- ບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດ ເຄື່ອນໄຫວທຸລະກິດຫຼັກຊັບ ຢູ່ ສປປ ລາວ;
- ຕະຫຼາດຫຼັກຊັບລາວ.

**ເລື່ອງ** : ການສ້າງ, ພັດທະນາ ແລະ ນຳໃຊ້ລະບົບເຕັກໂນໂລຊີຂໍ້ມູນຂ່າວສານຂອງບໍລິສັດຫຼັກຊັບ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກກຊັບ ເລກທີ 006/ຄລຕ, ລົງວັນທີ 08 ກໍລະກົດ 2010.

## ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ອອກແຈ້ງການ:

1. ບໍລິສັດຫຼັກຊັບ ກ່ອນດຳເນີນການເຄື່ອນໄຫວທຸລະກິດຫຼັກຊັບ ແລະ ບໍລິສັດຫຼັກຊັບທີ່ໄດ້ຮັບການສ້າງຕັ້ງກ່ອນການອອກແຈ້ງການສະບັບນີ້ ຕ້ອງສ້າງ ແລະ ພັດທະນາລະບົບເຕັກໂນໂລຊີຂໍ້ມູນຂ່າວສານເປັນຂອງຕົນເອງ.

2. ການສ້າງ ແລະ ພັດທະນາລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ຂອງບໍລິສັດຫຼັກຊັບ ຕ້ອງປະຕິບັດຕາມຫຼັກການລວມ ຄື: ມີຄວາມສະດວກ, ປອດໄພ ແລະ ມີປະສິດທິພາບສູງ ສາມາດຮັບປະກັນການປະຕິບັດວຽກງານຂອງບໍລິສັດຫຼັກຊັບໃຫ້ໄດ້ຮັບຜົນດີ.

3. ກ່ອນການດຳເນີນການສ້າງ ແລະ ພັດທະນາລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ຕ້ອງສົ່ງບົດວິພາກກ່ຽວກັບລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ໃຫ້ສຳນັກງານ ຄລຕ ເພື່ອຮັບຮອງ.

4. ລະບົບເຕັກໂນໂລຊີຂໍ້ມູນຂ່າວສານຂອງບໍລິສັດຫຼັກຊັບ ຕ້ອງປະກອບດ້ວຍລະບົບຕ່າງໆ ທີ່ເປັນພື້ນຖານ ດັ່ງນີ້:
   4.1. ລະບົບພື້ນຖານໂຄງລ່າງ (Infrustructure) ດ້ານເຕັກໂນໂລຊີຂໍ້ມູນຂ່າວສານ: ເຄື່ອງແມ່ຂ່າຍ (Server), ລະບົບເຄືອຂ່າຍ (Network), ລະບົບປະຕິບັດການ (Operating System), ລະບົບຮັກສາຄວາມປອດໄພ (Security System), ລະບົບສຳຮອງ (Backup System), ລະບົບຕິດຕາມກວດກາ (Monitoring);
   4.2. ລະບົບບໍລິຫານບັນຊີລູກຄ້າ (Account Management);
   4.3. ລະບົບສະສາງ-ຊຳລະ (Clearing and Settlement);
   4.4. ລະບົບການບໍລິຫານການສົ່ງຄຳສັ່ງຊື້-ຂາຍຫຼັກຊັບ;
   4.5. ລະບົບການຈອງ ແລະ ຈັດສັນຫຼັກຊັບທີ່ນຳສະເໜີຂາຍໃນຕະຫຼາດຂັ້ນໜຶ່ງ (Initial Public Offering, Private Offering ແລະ Right Offering);
   4.6. ລະບົບຖານຂໍ້ມູນຫຼັກ ແລະ ຂໍ້ມູນສຳຮອງກ່ຽວກັບ ການຊື້-ຂາຍ (Database);
   4.7. ລະບົບການລາຍງານພາຍໃນຫ້ອງການ ແລະ ພາຍນອກ (Internal and External Reporting System);
   4.8. ລະບົບອື່ນໆ ທີ່ຈຳເປັນສຳລັບການເຄື່ອນໄຫວທຸລະກິດຫຼັກຊັບ ທີ່ໄດ້ຮັບອະນຸຍາດ.

5. ພາຍຫຼັງການສ້າງ ແລະ ພັດທະນາສຳເລັດໃນແຕ່ລະລະບົບ ຕ້ອງລາຍງານຢ່າງເປັນລາຍລັກອັກສອນ ໃຫ້ສຳນັກງານ ຄລຕ ເພື່ອດຳເນີນການທົດສອບ ແລະ ປະເມີນຜົນກ່ອນການນຳໃຊ້ແຕ່ລະລະບົບ. ການທົດສອບ ແລະ ປະເມີນຜົນການນຳໃຊ້ຂອງລະບົບ ປະກອບດ້ວຍຄະນະຈາກສຳນັກງານ ຄລຕ, ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ.

6. ບໍລິສັດຫຼັກຊັບ ຕ້ອງຄຸ້ມຄອງຖານຂໍ້ມູນ ຕາມການກຳນົດ ດັ່ງນີ້:
   6.1. ຂໍ້ມູນທຸກຢ່າງຕ້ອງເກັບຮັກສາໄວ້ໃນຖານຂໍ້ມູນຂອງບໍລິສັດຫຼັກຊັບເອງ ຢູ່ພາຍໃນ ສປປ ລາວ;
   6.2. ຕ້ອງມີວິທີການ ແລະ ອຸປະກອນທີ່ໄດ້ມາດຕະຖານສາກົນ ໃນການເກັບສຳຮອງຂໍ້ມູນ;
   6.3. ຕ້ອງຮັບປະກັນຄວາມອາດສາມາດໃນການກູ້ຄືນຂໍ້ມູນໃນກໍລະນີສຸກເສີນ;
   6.4. ຕ້ອງສາມາດສະໜອງຂໍ້ມູນໃຫ້ ສຳນັກງານ ຄລຕ ແລະ ຕະຫຼາດຫຼັກຊັບລາວ ຕາມລະບຽບການ.

7. ບໍລິສັດຫຼັກຊັບ ຕ້ອງມີສູນສຳຮອງຂໍ້ມູນ ເປັນຂອງຕົນເອງ ທີ່ຕັ້ງຢູ່ ສປປ ລາວ ຕາມມາດຕະຖານ ດັ່ງນີ້:
   7.1. ສູນສຳຮອງຂໍ້ມູນຄວນສາມາດປະຕິບັດວຽກງານແທນສູນຫຼັກໄດ້ ໃນກໍລະນີສຸກເສີນ;
   7.2. ຂໍ້ມູນຢູ່ສູນສຳຮອງຄວນໄດ້ຮັບການປັບປຸງຂໍ້ມູນໃຫ້ເປັນປັດຈຸບັນ ຫຼື ຢ່າງໜ້ອຍ 1 ວັນ ທຽບໃສ່ຖານຂໍ້ມູນຫຼັກຂອງບໍລິສັດ;

7.3 ມີຫ້ອງຕິດຕັ້ງລະບົບ ທີ່ຮັບປະກັນດ້ານລະບົບຄວາມເຢັນ, ລະບົບກຳລັງໄຟ, ລະບົບຮັກສາອຸນນະພູມ, ລະບົບດັບເພີງ, ລະບົບກ້ອງວົງຈອນປິດ ແລະ ລະບົບແຈ້ງເຕືອນ ເປັນຕົ້ນ;

7.4 ຕ້ອງມີມາດຕະການໃນການກູ້ຂໍ້ມູນທີ່ຮັບປະກັນ ແລະ ທັນກັບສະພາບການ;

7.5 ສູນສຳຮອງຂໍ້ມູນຕ້ອງຕັ້ງຢູ່ພື້ນທີ່ຫ່າງໄກຈາກສູນຂໍ້ມູນຫຼັກ ແລະ ບໍ່ຕັ້ງຢູ່ຮ່ວມເສັ້ນທາງດຽວກັນ.

ກໍລະນີ ບໍລິສັດຫຼັກຊັບ ຕ້ອງການຝາກຂໍ້ມູນໄວ້ກັບສູນສຳຮອງຂໍ້ມູນຂອງອົງກອນອື່ນ ຕ້ອງໄດ້ ຮັບການຕົກລົງເຫັນດີຈາກ ສຳນັກງານ ຄລຕ.

8. ໃນການສ້າງ ແລະ ພັດທະນາລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ບໍລິສັດຫຼັກຊັບ ຕ້ອງຮັບປະກັນການເຊື່ອມຕໍ່ກັບຕະຫຼາດຫຼັກຊັບ, ສຳນັກງານ ຄລຕ, ສາຂາຍ່ອຍຂອງບໍລິສັດຫຼັກຊັບ, ທະນາຄານທຸລະກິດ ແລະ ທະນາຄານດູແລຊັບສິນ ທີ່ເປັນເຄືອຂ່າຍຂອງຕົນ ເພື່ອຮັບປະກັນການແລກປ່ຽນຂໍ້ມູນ, ການໂອນຍ້າຍຂໍ້ມູນ ແລະ ການດຳເນີນງານຂອງລະບົບ ຜ່ານທາງອີເລັກໂທຣນິກ ແລະ ອື່ນໆ.

9. ຕະຫຼາດຫຼັກຊັບລາວ ຕ້ອງອຳນວຍຄວາມສະດວກ ໃນການສ້າງ ແລະ ພັດທະນາລະບົບຂອງບໍລິສັດຫຼັກຊັບ ເພື່ອຮັບປະກັນການເຊື່ອມຕໍ່ ເຊິ່ງກັນ ແລະ ກັນຢ່າງມີປະສິດທິຜົນ.

10. ການແກ້ໄຂ ແລະ ການປ່ຽນແປງ ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ຂອງບໍລິສັດຫຼັກຊັບແຕ່ລະຄັ້ງ ຕ້ອງໄດ້ຮັບການຮັບຮອງຈາກ ສຳນັກງານ ຄລຕ.

ສະນັ້ນ, ຈຶ່ງໄດ້ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງເພື່ອຊາບ ແລະ ພ້ອມກັນປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຫົວໜ້າສຳນັກງານ ຄລຕ

ວັດທະນາ ດາລາລອຍ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---===000===---

ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ

ສຳນັກງານ ຄລຕ

ເລກທີ 377 /ສຄລຕ

ນະຄອນຫຼວງວຽງຈັນ, ວັນທີ 24 FEB 2012

## ສະໂນດນຳສົ່ງເອກະສານ

**ເຖິງ:** ທ່ານ ປະທານຄະນະກຳມະການ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ;
ທ່ານ ຜູ້ອຳນວຍການ ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ;
ທ່ານ ຜູ້ອຳນວຍການ ບໍລິສັດ ທຄຕລ-ກທ ຈຳກັດ.

**ເລື່ອງ:** ນຳສົ່ງເອກະສານ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 006/ຄລຕ, ລົງວັນທີ 08 ກໍລະກົດ 2010.

ສຳນັກງານ ຄລຕ ຂໍຖືເປັນກຽດນຳສົ່ງ ແຈ້ງການ ກ່ຽວກັບ ການສ້າງ, ພັດທະນາ ແລະ ນຳໃຊ້ລະບົບເຕັກໂນໂລຊີຂໍ້ມູນຂ່າວສານຂອງບໍລິສັດຫຼັກຊັບ ມາຍັງທ່ານຊາບ ລາຍລະອຽດ ດັ່ງລຸ່ມນີ້:

| ລຳດັບ | ເນື້ອໃນເອກະສານ | ຈຳນວນ | ໝາຍເຫດ |
|---|---|---|---|
| 1 | ແຈ້ງການ: ການສ້າງ, ພັດທະນາ ແລະ ນຳໃຊ້ລະບົບເຕັກໂນໂລຊີຂໍ້ມູນຂ່າວສານຂອງບໍລິສັດຫຼັກຊັບ. | 01 ຊຸດ | ເພື່ອຊາບ ແລະ ເປັນບ່ອນອີງໃນການເຄື່ອນໄຫວວຽກງານ. |

ດັ່ງນັ້ນ, ຈຶ່ງໄດ້ນຳສົ່ງເອກະສານມາຍັງທ່ານຊາບ ແລະ ປະຕິບັດຕາມເນື້ອໃນຈິດໃຈດັ່ງກ່າວດ້ວຍ.

ລ/ນ ແທນ **ຫົວໜ້າສຳນັກງານ ຄລຕ**

**ສາຍສະໝອນ ຈັນທະຈັກ**